ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຮ່າງບົດບັນທຶກ

## ກອງປະຊຸມສຸກເສີນໄພນ້ຳຖ້ວມ ຄັ້ງວັນທີ 07 ກັນຍາ 2018

ການດຳເນີນກອງປະຊຸມໄດ້ຈັດຂຶ້ນໃນເວລາ 10:10 ໂມງ ຂອງວັນທີ 03 ກັນຍາ 2018 ພາຍໃຕ້ການເປັນປະທານຂອງທ່ານ ດຣ. ສີສະຫວາດ ສຸດທານີລະໄຊ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ໂດຍມີທ່ານ ຫົວໜ້າ/ຮອງຫົວໜ້າ ກົມ, ສູນ ແລະ ວິຊາການ ຈາກບັນດາ ກົມ, ສູນອ້ອມຂ້າງກະຊວງສາທາລະນະສຸກ ແລະ ຕົວແທນຈາກ ອົງການ WHO, UNICEF, UNFPA,IOM ເຂົ້າຮ່ວມລວມທັງໝົດ 15 ທ່ານ, ຍິງ 07 ທ່ານ. ລາຍລະອຽດ ລາຍຊື່ຜູ້ເຂົ້າຮ່ວມແມ່ນໄດ້ຄັດຕິດມາພ້ອມນີ້.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບວຽກງານແຕ່ລະດ້ານໃນມື້ທີ່ຜ່ານມາ ແລະ ແຜນການວຽກຈຸດສຸມສຳລັບມື້ຕໍ່ໄປ ຈາກບັນດາ ກົມ, ສູນ ອ້ອມຂ້າງກະຊວງສາທາລະນະສຸກ ແລະ ຄູ່ຮ່ວມພັດທະນາ. ລາຍລະອຽດມີດັ່ງລຸ່ມນີ້:

### I. ຈາການລາຍງານຂອງບັນດາແຜນງານ:

### 1. ແຜນງານປິ່ນປົວ:

- ທີມງານແພດ 16 ຄົນໄດ້ລົງໄປຊ່ວຍແຂວງອັດຕະປືແມ່ນຈາກໂຮງໝໍມິດຕະພາບ, ມະໂຫສົດ, ແມ່ແລະເດັກ ແລະ ຈາກໂຮງໝໍແຂວງ, ສະພາບການກວດຄົນເຈັບຢູ່ເຂດນອກສ່ວນຫຼາຍມີບັນລະບົບຫາຍໃຈ, ໄຂ້ຫວັດ 58 ກໍລະນີ, ຄແດງ68 ກໍລະນີ, ລະບົບລະລາຍ, ຖອກທ້ອງ, ພະຍາດຜິວໜັງ ແລະ ລະບົບປະສານ, ສົ່ງເຂົ້ານອນໂຮງໝໍເມືອງ 38 ກໍລະນີ ບໍ່ມີກໍລະນີໄດ້ສົ່ງຕໍ່ໂຮງໝໍແຂວງ.
- ສະພາບທົ່ວໄປຍັງຢູ່ສະພາບປົກະຕິສະເລ່ຍແລ້ວ ກວດເຂດນອກມື້ໜຶ່ງປະມານ 250 ກໍລະນີ, ສຳລັບບັນຫາການຈັດຕັ້ງສົ່ງທີມແພດລົງຊ່ວຍຄິດວ່າຍັງຄົງຕ້ອງໄດ້ສົ່ງໄປກ່ອນ.

### 2. ແຜນງານ ອາຫານ ແລະ ຢາ

- ສືບຕໍ່ຂຶ້ນແຜນບັນຊີເຄື່ອງຊ່ວຍເຫຼືອທີ່ໄດ້ຮັບການຊ່ວຍເຫຼືອ ຍັງບໍ່ທັນສາມາດລວບລວມຈຳນວນທັງໝົດໄດ້.
- ຢາທີ່ເຮົາມີຢູ່ໃນສາງໃນພາກສະໜາມແມ່ນຍັງມີຢາຮັບຮອງຢູ່ໃນສາງພຽງພໍ.
- ອົງການກາແດງໄດ້ຊ່ວຍເຫຼືອຢາ 39 ລາຍການປະມານ 2.000 ເອີໂຣ ໃນນັ້ນມີຖົງມືຈຳນວນ 5.000 ຄູ່.
- ລົງກວດຖົງເຄື່ອງຂອງປະຊາຊົນທີ່ໄດ້ຮັບການຊ່ວຍເຫຼືອ ເພິ່ນໄດ້ກວດຊຸມ ບໍ່ໄດ້ກວດທຸກຢ່າງ.
- ສະພາບອື່ນໆແມ່ນປົກະຕິ

- ເພິ່ນໄດ້ເຮັດສະເໜີດ່ວນມາຈາກບ້ານກົກເລົາແຂວງຫົວພັນ, ກົມອາຫານ ແລະ ຢາໄດ້ປະສານງານຫາ ອຢແຂວງ ໃຫ້ເພິ່ນສະຫຼຸບລວມຄວາມຈຳເປັນແທ້ໆ ແລ້ວສະເໜີລວມທັງໝົດຈາກແຂວງ ແຕ່ປະຈຸບັນເພິ່ນຍັງບໍ່ທັນສາມາດສະຫຼຸບຕົວເລກໃຫ້ໄດ້ເທື່ອ, ເພາະບໍ່ຢາກໃຫ້ສັບສົນ.

## 3. ແຜນງານຄວບຄຸມພະຍາດຕິດຕໍ່

- ເກັບກຳຂໍ້ມູນຢູ່02 ຈຸດບໍລິການໂຮງຮຽນປະຖົມ ແລະ ອະນຸບານ, ບໍ່ມີແພດປະຈາການແລ້ວ ແມ່ນໃຫ້ໄປໃຊ້ບໍລິການຢູ່ໂຮງໝໍເມືອງ. ທີມງານຕອບໂຕ້ດ່ວນກໍ່ໄດ້ລົງໄປເກັບຂໍ້ມູນນຳນາຍບ້ານ, ໄດ້ຮັບລາຍງານຈາກບ້ານຕາມະຢອດ, ດອນບົກ, ປິ່ນດົງເປັນປົກະຕິຈາກແພດທີ່ປະຈຳຢູ່ສຸກສາລາ ໂດຍບັນທຶກຕາມສະຖານໂດຍອີງຕາມ 15 ພະຍາດ.
- ໄດ້ມອບຮັບ Rapid test ໃຫ້ແກ່ໂຮງໝໍເມືອງສະໜາມຈຳນວນ 24 ອັນ.
- ທີມງານໄຂ້ຍຸງ ແຂວງ ແລະ ເມືອງໄດ້ລົງສຳຫຼວດການນຳໃຊ້ມຸ້ງຍ້ອມຢາຢູ່ຈຸດບ້ານປິ່ນດົງ ເຊິ່ງອັດຕາການປົກຄຸມແມ່ນໄດ້ 104% ແລະ ທີມງານໄຂ້ຍຸງໄດ້ເຈາະເລືອດຊອກໄຂ້ຍຸງ32 ຕົວຢ່າງ ແຕ່ບໍ່ພົບເຊື້ອ.
- ບັນຫາທີ່ພົບ03 ບ້ານທີ່ເຂົ້າຍາກແມ່ນມີຄວາມຫຍຸ້ງຍາກໃນການເກັບກຳຂໍ້ມູນ ເນື່ອງຈາກບໍ່ໄດ້ຮັບຍ້ອນສັນຍານໂທລະສັບບໍ່ຄ່ອຍດີ.
- ສືບຕໍ່ລົງສືບສວນກໍລະນີເສຍຊີວິດ ກໍລະນີສົງໄສໄຂ້ຍຸງລາຍ ແລະ ໄດ້ສົ່ງມາໂຮງໝໍແຂວງໃນວັນທີ 4 ກັນຍາ 2018.

## 4. ແຜນອະນາໄມ ແລະ ສົ່ງເສີມສຸຂະພາບ:

- ກະກຽມທີມງານແມ່ແລະເດັກລົງໄປແຂວງອັດຕະປືກະໄດ້ຂຶ້ນມາໝົດແລ້ວ.
- ກະກຽມທີມງານຂຶ້ນໄປຊ່ວຍຢູ່ແຂວງຫົວພັນ ເພື່ອໄປເບິ່ງຕູ້ເຢັນ ແລະ ຢາວັກຊີນ.
- ກົມອະນາໄມ ແລະ ສົ່ງເສີມສຸຂະພາບໄດ້ເຮັດໜັງສືແຈ້ງການລົງແຂວງອັດຕະປືກ່ຽວກັບການລ້າງບໍບາດານເຈາະ ແລະ ຂ້າເຊືອດ້ວຍຄໍຣລີນເພື່ອປ້ອງກັນພະຍາດລະບາດ.
- ບໍລິສັດ ເອດເຄໄດ້ເຈາະບໍບາດານຢູ່ບ້ານຫາດຍາວ ບໍທີ 01 ພົບ ອາຊີນິກ 0,32 ແລະ ບໍທີ 02 ພົບ ອາຊີນິກ 0,16 ໃນນໍ້າບາດານ 02 ບໍແມ່ນບໍ່ໄດ້ໃຫ້ນຳໃຊ້ ແມ່ນໄດ້ແນະນຳໃຊ້ໃຫ້ໄປເຈາະບ່ອນໃໝ່.
- ສຳລັບເອກະສານຈ່າຍຄ່າກວດນໍ້າແມ່ນກົມອະນາໄມ ແລະ ສົ່ງເສີມສຸຂະພາບກຳລັງດຳເນີນເອກະສານພາຍໃນກົມຢູ່.
- ຂໍ້ມູນແມ່ນກອງເລຂາໄດ້ສັງລວມໃຫ້ແຂວງແລະ ໄດ້ສົ່ງໃຫ້ແຂວງອາທິດແລ້ວ. ແຕ່ບາງແຂວງກໍ່ມີນໍ້າຖ້ວມເພີ້ມຕື່ມ ແຕ່ຖ້າຈະລໍຖ້າໃຫ້ກອງເລຂາສະຫຼຸບໃຫ້ເພີ້ມແມ່ນອາດຈະຊ້າ. ສະເໜີໃຫ້ນຳໃຊ້ຂໍ້ມູນທີ່ໄດ້ສົ່ງອາທິດແລ້ວກ່ອນ.

## 5. WHO:

- ໃນວັນທີ3 ກັນຍາ 2018 ໄດ້ສະເໜີ 02 ກິດຈະກຳ: 1. EMT Coordination Orientation meeting ເພິ່ນສະເໜີຈັດໃນເດືອນ ຕຸລາ ຫລື ເດືອນພະຈິກ ສະເໜີຖາມວ່າສືບຕໍ່ຈະຈັດກອງປະຊຸມ ຫລືບໍ່ (ໃນກິຈະກຳດັ່ງກ່າວແມ່ນເພິ່ນຈະເວົ້າເຖິງການລົງທະບຽນຂອງທີມງານແພດສາກົນທີ່ຈະເຂົ້າມາຊ່ວຍ ແລະມີການຕິດພັນເງື່ອນໄຂຕ່າງໆກັບອາຊຽນ, ໃນການຂໍທີມງານແພດສາກົນຕ້ອງໄດ້ຂໍຂໍ້ມູນໃດແດ່, ການຄຸ້ມຄອງທີມງານແພດ. 2. After action review response in Attapu

6. **ກອງເລຂາ:**

- ໄດ້ນຳສະເໜີໃບຟອມສັງລວມຂໍ້ມູນໄພພິບັດນໍ້າຖ້ວມກະຊວງສາທາລະນະສຸກ ຊຶ່ງໄດ້ປະກອບຂໍ້ມູນຕ່າງໆຈາກ04 ສາຍງານຫຼັກ ແຕ່ຍັງບໍ່ທັນໄດ້ເປັນຟອມສຸດທ້າຍເທື່ອ. ຟອມນີ້ຈະເປັນຟອມໃນການຊ່ວຍເລືອໃນອະນາຄົດໃນເວລາລົງໄປຊ່ວຍແຂວງ.
- ບາງຂໍ້ມູນທີ່ແຂວງສົ່ງຂຶ້ນມາແມ່ນຂາດຂໍ້ມູນ ແລະ ບໍ່ທັນສັດເຈນ.
- ຜ່ານໃນກອງປະຊຸມມື້ນີ້ແລ້ວແມ່ນຈະສົ່ງໃຫ້ແຕ່ລະສາຍງານ ເພື່ອຕື່ມບາງຂໍ້ມູນທີ່ບໍ່ທັນຄົບ.

7. **UNFPA:**

- ສະເໜີໃຫ້ໄປເບິ່ງຂໍ້ມູນພື້ນຖານຢູ່ນຳລະບົບ DHIS II ເພື່ອໃຫ້ເອົາໃສ່ເພີ່ມຕື່ມ.

## II. ມະຕິຂອງກອງປະຊຸມ:

1. ສະເໜີໃຫ້ຄູ່ຮ່ວມພັດທະນາຊ່ວຍກະກຽມຂໍ້ມູນການຊ່ວຍເຫຼືອເປັນມູນຄ່າຈຳນວນເທົ່າຕັ້ງແຕ່ເລີ້ມເກີດສະພາບຈົນຮອດປະຈຸບັນ ແລະໃຫ້ສົ່ງພາຍໃນວັນທີ 7 ກັນຍາ 2018.
2. ມອບໃຫ້ກອງເລຂາປະສານງານກ່ຽວກັບຂໍ້ມູນພື້ນຖານຈາກລະບົບ DHIS II ຂອງແຕ່ລະແຂວງມາເພີ້ມໃສ່ໃນຖານຂໍ້ມູນຂອງຟອມສັງລວມຂໍ້ມູນໄພພິບັດນໍ້າຖ້ວມກະຊວງສາທາລະນະສຸກ.

**ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່**

**ເຊັນແທນຫົວໜ້າກອງເລຂາຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດ**